ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 20480 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ 29 / 12 / 2011

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ

## ວ່າດ້ວຍ ການຄຸ້ມຄອງການຕິດຊັ່ງນໍ້າໜັກລົດບັນທຸກໃນຂອບເຂດທົ່ວປະເທດ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22/10/2007 ວ່າດ້ວຍການ ຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະຂົນສົ່ງ;
- ອີງຕາມມະຕິຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ ກ່ຽວກັບຜົນຂອງກອງປະຊຸມຮ່ວມລະຫວ່າງ ລັດຖະບານ ກັບເຈົ້າຄອງນະຄອນຫລວງວຽງຈັນ ແລະ ເຈົ້າແຂວງທົ່ວປະເທດ, ສະບັບເລກທີ 01/ລບ, ລົງວັນທີ 9/02/2011;
- ອີງຕາມແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 1179/ຄລບ, ລົງວັນທີ 17/06/2011 ກ່ຽວກັບການຍົກເລີກບັນດາປ້ອມ-ຈຸດກວດກາ ເພື່ອເກັບຄ່າຕ່າງໆ ໂດຍບໍ່ຖືກຕ້ອງ ແລະ ການອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າ ແລະ ຂົນສົ່ງໂດຍສານ ຜ່ານດ່ານສາກົນທົ່ວປະເທດ.

### ລັດຖະມົນຕີວ່າການ ຕົກລົງ:

<u>ມາດຕາ1 :</u> ໃຫ້ຮັກສາສະຖານີຕິດຊັ່ງນໍ້າໜັກລົດບັນທຸກ (ຊຶ່ງຕໍ່ໄປເອີ້ນວ່າ ສະຖານີຕິດຊັ່ງ) ຈຳນວນ 13 ແຫ່ງ ທີ່ຕັ້ງຢູ່ຕາມດ່ານຊາຍແດນສາກົນເພື່ອຈັດຕັ້ງປະຕິບັດການຕິດຊັ່ງນຳໜັກລົດບັນທຸກຕາມປົກກະຕິ.

<u>ມາດຕາ2:</u> ໃຫ້ຮັກສາສະຖານີຕິດຊັ່ງນໍ້າໜັກ ຈຳນວນ 24 ແຫ່ງ (ທີ່ຕັ້ງສະຖານີຕິດຊັ່ງ ໄດ້ຄັດຕິດມາພ້ອມນີ້) ເອີ້ນວ່າ ສະຖານີກວດກາສະເພາະກິດ ຢູ່ຕາມເສັ້ນທາງຫລວງສາຍຕ່າງໆ ເພື່ອຈັດຕັ້ງປະຕິບັດການກວດກາສະເພາະກິດ ຊຶ່ງເຈົ້າໜ້າທີ່ປະຈຳສະຖານີມີໜ້າທີ່ດຳ

ເນີນການກວດກາລົດບັນທຸກເປັນບາງຄັ້ງຄາວຢູ່ໃນຂອບເຂດສະຖານີ ໃນກໍລະນີໃດໜຶ່ງທີ່ແນ່ນອນເທົ່ານັ້ນ.

ມາດຕາ3: ການກຳນົດຄວາມຮັບຜິດຊອບໃນການຄຸ້ມຄອງສະຖານີຕິດຊັ່ງ:

1. ສະຖານີຕິດຊັ່ງນ້ຳໜັກລົດບັນທຸກ ທຸກແຫ່ງທີ່ກຳນົດໄວ້ຢູ່ໃນມາດຕາ 1 ແລະ 2 ຂ້າງເທິງ ທີ່ມີທີ່ຕັ້ງຢູ່ໃນຂອບເຂດທ້ອງຖິ່ນໃດ ແມ່ນມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ນະຄອນຫຼວງ ທ້ອງຖິ່ນນັ້ນເປັນຜູ້ຄຸ້ມຄອງ. ສະຖານີກວດກາສະເພາະກິດ ຈຳນວນ 24 ແຫ່ງ ແຕ່ລະແຫ່ງຕ້ອງປະກອບພະນັກງານຊຶ່ງເປັນ ລັດຖະກອນ ປະຈຳການເປັນປົກກະຕິຕະຫລອດ 24 ຊົ່ວໂມງ ເພື່ອປົກປັກຮັກສາຊັບສິນຂອງສະຖານີ ແລະ ກຽມພ້ອມປະຕິບັດໜ້າທີ່, ພ້ອມດຽວກັນນີ້ ກໍໃຫ້ປະຕິບັດລະບອບເງິນເດືອນ ແລະ ນະໂຍບາຍຕ່າງໆຕາມລະບຽບການ ໃຫ້ແກ່ພະນັກງານທີ່ປະຈຳການດັ່ງກ່າວ.
2. ການອານຸຍາດກວດກາສະເພາະກິດ ຂັ້ນແຂວງ ແມ່ນ ທ່ານ ເຈົ້າແຂວງ ເປັນຜູ້ຕົກລົງ, ຂັ້ນສູນກາງແມ່ນ ທ່ານ ລັດຖະມົນຕີວ່າການ ກະຊວງ ຍທຂ ເປັນຜູ້ຕົກລົງ.
3. ໃນການກວດກາຕິດຊັ່ງນ້ຳໜັກ, ຖ້າພົບເຫັນນ້ຳໜັກເກີນ ຕ້ອງໄດ້ເອົາສິນຄ້າທີ່ມີນ້ຳໜັກເກີນດັ່ງກ່າວລົງ ແລະ ໃຫ້ດຳເນີນການຕາມລະບຽບການທີ່ໄດ້ກຳນົດຢ່າງເຂັ້ມງວດ. ນອກຈາກການດຳເນີນການຕິດຊັ່ງ ຫລື ກວດການ້ຳໜັກຕາມລະບຽບການແລ້ວ ບໍ່ອະນຸຍາດໃຫ້ລົດຂົນສົ່ງທຸກປະເພດເຂົ້າມາຈອດພັກ ຫລື ຄຽນຖ່າຍສິນຄ້າ ໃນຂອບເຂດສະຖານີ ເພື່ອຫລີກເວັ້ນຄວາມເສຍຫາຍທີ່ຈະເກີດຂຶ້ນແກ່ເດີ່ນ ຫລື ຊັບສິນອື່ນ ຂອງສະຖານີ.

ມາດຕາ4: ຖ້າເຫັນວ່າມີຄວາມຈຳເປັນຈະຕ້ອງໄດ້ສ້າງສະຖານີສະເພາະກິດຂຶ້ນໃໝ່ ເພື່ອແນ່ໃສ່ປົກປັກຮັກສາເສັ້ນທາງຫຼວງ, ແມ່ນມອບໃຫ້ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງທີ່ກ່ຽວຂ້ອງເປັນຜູ້ຄົ້ນຄ້ວາ, ຈາກນັ້ນ ຈຶ່ງໃຫ້ສະເໜີເຖິງ ທ່ານ ລັດຖະມົນຕີວ່າການ ກະຊວງ ຍທຂ ໂດຍຜ່ານການເຫັນດີ ຈາກ ທ່ານ ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ.

**ມາດຕາ5:** ມອບໃຫ້ກົມຂົນສົ່ງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ໂຄສະນາເຜີຍແຜ່ ພ້ອມທັງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ6:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ.

ສົມມາດ ພົລເສນາ

**ບ່ອນສົ່ງ:**

| | | |
|---|---|---|
| - ຫ້ອງວ່າການລັດຖະບານ | 02 ສະບັບ | ເພື່ອລາຍງານ |
| - ຫ້ອງວ່າການແຂວງ ແລະ ນະຄອນຫລວງ ບ່ອນລະ | 01 ສະບັບ | ເພື່ອປະສານສົມທົບ |
| - ພະແນກ ຍທຂ ແຂວງ ແລະ ນະຄອນຫລວງ ບ່ອນລະ | 01 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| - ກົມຂົນສົ່ງ | 01 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| - ຫ້ອງການກະຊວງ ຍທຂ, ກົມຂົວທາງ, ກອງທຶນທາງ ບ່ອນລະ | 01 ສະບັບ | ເພື່ອປະສານສົມທົບ |
| - ສຳເນົາ | 02 ສະບັບ | |

## ຈຳນວນບັນຊີ ສະຖານີຊັ່ງນ້ຳໜັກ ທີ່ຕິດຊັ່ງເປັນປົກກະຕິ, ກວດກາສະເພາະກິດ ແລະ ຍຸບເລີກ ໃນຂອບເຂດ ທົ່ວປະເທດ

| No | ຊື່ແຂວງ | ທີ່ຕັ້ງ ສະຖານີ | ທຶນກໍ່ສ້າງ | ສະຖານີ ຕິດຊັ່ງ ປົກກະຕິ | ສະຖານີ ກວດກາ ສະເພາະກິດ | ສະຖານີ ນຳສະເໜີ ຂັ້ນເທິງຍຸບເລີກ |
|---|---|---|---|---|---|---|
| 1 | ຜົ້ງສາລີ | ທາງເລກທີ 1B, 3 ແຍກບ້ານຍໍ້, ເມືອງບຸນເໜືອ, ແຂວງຜົ້ງສາລີ. | RMP1 | | ✓ | |
| 2 | ຫຼວງນ້ຳທາ | ທາງເລກທີ 17A, 3 ແຍກເມືອງສິງ, ບ້ານສີງຈະເລີນ, ເມືອງສິງ, ແຂວງຫຼວງນ້ຳທາ (ຊາຍແດນລາວ - ຈີນ). | RMP1 | ✓ | | |
| | | ທາງເລກ R3 , ບ້ານບໍເຕັນໃໝ່, ເມືອງນ້ຳທາ, ແຂວງຫລວງນ້ຳທາ (ຊາຍແດນລາວ - ຈີນ) | ADB/R3 | ✓ | | |
| 3 | ບໍແກ້ວ | ທາງເລກ 3 ຫລັກ 2 ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ (ບໍ່ມີສະຖານີ, ກວດກາສະເພາະກິດ) | ADB/R3 | | | |
| 4 | ຫົວພັນ | ທາງເລກທີ 6, ກມ 171, ບ້ານເຕືອຍ, ເມືອງວຽງໄຊ ແຂວງຫົວພັນ (ຊາຍແດນ ລາວ-ຫວຽດນາມ) | RMF | ✓ | | |
| 5 | ຊຽງຂວາງ | ທາງເລກ 7 ຫລັກ 14, ບ້ານລັງໄຂ, ເມືອງພວນ, ແຂວງ ຊຽງຂວາງ | RMP1 | | ✓ | |
| | | ທາງເລກທີ 7, ຊາຍແດນນ້ຳກັ່ນ , ແຂວງຊຽງຂວາງ(ຊາຍແດນ ລາວ-ຫວຽດນາມ) | RMP1 | ✓ | | |
| 6 | ອຸດົມໄຊ | ທາງເລກທີ 13 ເໜືອ, ກມ 4, ບ້ານຫ້ວຍຂຸ່ມ, ເມືອງໄຊ, ແຂວງອຸດົມໄຊ. | RMP2 | | ✓ | |
| 7 | ຫຼວງພະບາງ | ທາງເລກທີ 13 ເໜືອ, ກມ 20, ບ້ານມູດ, ເມືອງຊຽງເງິນ, ແຂວງຫຼວງພະບາງ. | RMP1 | | ✓ | |
| 8 | ໄຊຍະບູລີ | ທາງເລກ 4, ຫລັກ 175, ເມືອງປາກລາຍ, ແຂວງ ໄຊຍະບູລີ(ຂົວສາກົນນ້ຳເຫືອງ ລາວ-ໄທ) | ADB11 | ✓ | | |
| | | ທາງເລກ 4, ຫລັກ 260, ເມືອງແກນທ້າວ, ແຂວງ ໄຊຍະບູລີ(ຂົວສາກົນນ້ຳເຫືອງ ລາວ-ໄທ) | ເອກະຊົນ | | | ✓ |
| 9 | ແຂວງວຽງຈັນ | ທາງເລກທີ 13 ເໜືອ, ກມ128, ບ້ານສີວິໄລ, ເມືອງຫີນເຫີບ, ແຂວງວຽງຈັນ. | RMP1 | | ✓ | |

| | | | | | | |
|---|---|---|---|---|---|---|
| 10 | ນະຄອນຫຼວງ ວຽງຈັນ | ທາງເລກທີ 13 ເໜືອ, ກມ 21, ບ້ານໂຄກສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. | RMP1 | | ✓ | |
| | | ທາງເລກທີ A 12, ກມ 17, ບ້ານດົງໂພສີ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ (ຊາຍແດນ ລາວ-ໄທ). | RMP1 | ✓ | | |
| | | ທາງເລກທີ 11, ກມ 5, ບ້ານເກົ້າລ້ຽວ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ. | RMP1 | | ✓ | |
| | | ທາງເລກທີ 13 ເໜືອ, ກມ 30, ບ້ານແຈ້ງສະຫວ່າງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ. | RMP1 | | ✓ | |
| | | ໜ່ວຍກວດກາເຄື່ອນທີ່ (ບໍ່ມີສະຖານີ, ກວດກາສະເພາະກິດ ເປັນບາງຄັ້ງຄາວ) | RMP1 | | | |
| | | ທາງເລກທີ 1, ຂົວມິດຕະພາບ I, ບ້ານດົງໂພສີ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ. | ເອກະຊົນ | | | ✓ |
| 11 | ບໍລິຄຳໄຊ | ທາງເລກທີ 8, ກມ 1, ບ້ານວຽງຄຳ, ເມືອງປາກກະດິງ, ແຂວງບໍລິຄຳໄຊ | SIDA | | ✓ | |
| | | ທາງເລກທີ 8, ກມ 10, ບ້ານຫຼັກ 12, ເມືອງຄຳເກີດ, ແຂວງບໍລິຄຳໄຊ(ຊາຍແດນລາວ-ຫວຽດນາມ) | SIDA | ✓ | | |
| | | ທາງເລກທີ 13 ໄຕ້, ກມ 244, ບ້ານນາອີນ, ເມືອງປາກກະດິງ, ແຂວງບໍລິຄຳໄຊ | RMP1 | | ✓ | |
| | | ທາງເລກທີ 13 ໄຕ້, ກມ 2, ເມືອງປາກຊັນ, ແຂວງບໍລິຄຳໄຊ | RMP1 | | ✓ | |
| 12 | ຄຳມ່ວນ | ທາງເລກທີ 13 ໄຕ້, ກມ 8, ບ້ານນາບອບ, ເມືອງທ່າແຂກ, ແຂວງຄຳມ່ວນ | RMP1 | | ✓ | |
| | | ທາງເລກທີ 13 ໄຕ້, ກມ 50, ບ້ານຫຼັກເຈັດ, ເມືອງມະຫາໄຊ, ແຂວງຄຳມ່ວນ(ຊາຍແດນລາວ-ຫວຽດນາມ) | RMP1 | ✓ | | |
| | | ທາງເລກທີ 13 ໄຕ້, ກມ 4, ປາສັກ, ບ້ານທ່າແຂກເໜືອ, ເມືອງທ່າແຂກ, ແຂວງຄຳມ່ວນ. | RMP1 | | ✓ | |
| 13 | ສະຫວັນນະເຂດ | ທາງເລກທີ 9, ກມ 25, ບ້ານນາທາດ, ເມືອງອຸທຸມພອນ, ແຂວງສະຫວັນນະເຂດ. | RMP1 | | ✓ | |
| | | ທາງເລກທີ 9, ກມ 64, ບ້ານຄຳເຕີຍ, ເມືອງອາດສະພັງທອງ, ແຂວງສະຫວັນນະເຂດ. | RMP1 | | ✓ | |
| | | ທາງເລກ 9, ຂົວມິດຕະພາບ 2 ລາວ-ໄທ , ແຂວງສະຫວັນນະເຂດ (ຊາຍແດນ ລາວ-ໄທ) | JBIC/R9 | ✓ | | |
| | | ທາງເລກທີ 9,(ແດນສະຫວັນ) ເມືອງເຊໂປນ, ແຂວງສະຫວັນນະເຂດ.(ຊາຍແດນລາວ-ຫວຽດນາມ) | ADB | ✓ | | |
| | | ທາງເລກທີ 13 ໄຕ້, ກມ 35, ບ້ານຫຼັກ35, ເມືອງຈຳພອນ, ແຂວງສະຫວັນນະເຂດ. | RMP1 | | ✓ | |

| | | | | | | |
|---|---|---|---|---|---|---|
| 14 | ຈຳປາສັກ | ທາງເລກທີ 13 ໄຕ້, ກມ 26, ເມືອງຊະນະສົມບູນ, ແຂວງຈຳປາສັກ. | RMP1 | | ✓ | |
| | | ທາງເລກທີ 16, ກມ 11, ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ. | RMP1 | | ✓ | |
| | | ທາງເລກທີ 13 ໄຕ້ (ປາກເຊ-ໂຂງ), ກມ 20, ເມືອງປະທຸມພອນ, ແຂວງຈຳປາສັກ. | ADB8 | | ✓ | |
| | | ທາງເລກທີ 13 ໄຕ້ (ປາກເຊ-ໂຂງ), ກມ 84, ເມືອງໂຂງ, ແຂວງຈຳປາສັກ.(ຊາຍແດນລາວ-ກຳປູເຈັຍ) | RMP1 | ✓ | | |
| | | ກມ 7 ສາລາຂຽວດົງຈອງ , ເມືອງປາກເຊ, ແຂວງຈຳປາສັກ. | RMP1 | | ✓ | |
| | | ທາງເລກທີ 16, ກມ 30, ເມືອງໂພນທອງ, ແຂວງຈຳປາສັກ (ຊາຍແດນລາວ-ໄທ). | RMP1 | ✓ | | |
| 15 | ສາລະວັນ | ທາງເລກທີ 13ໄຕ້, ກມ 113, ບ້ານນາທອງ, ເມືອງນະຄອນເຜີງ, ແຂວງສາລະວັນ. | ບໍ່ມີຊື່ | | ✓ | |
| | | ທາງເລກທີ 20, ກມ 26, ບ້ານແບ່ງ, ເມືອງສາລະວັນ, ແຂວງສາລະວັນ. | ບໍ່ມີຊື່ | | ✓ | |
| | | ທາງເລກທີ 15, ກມ 156, ບ້ານລາໄລກ່ອງ, ເມືອງສະມ້ວຍ, ແຂວງສາລະວັນ. | RMP2 | | ✓ | |
| 16 | ອັດຕະປື | ທາງເລກທີ 18B, ກມ 7, ບ້ານລັນໝາກກ່ອງ, ເມືອງໄຊເສດຖາ, ແຂວງອັດຕະປື (ຊາຍແດນລາວ-ຫວຽດນາມ) | RMP1 | ✓ | | |
| 17 | ເຊກອງ | ທາງເລກທີ 16, ກມ 51, ບ້ານທ່າແຕງ, ເມືອງທ່າແຕງ, ແຂວງເຊກອງ. | RMP1 | | ✓ | |
| | | ລວມທັງໝົດ | | 13 | 24 | 2 |